ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ກົມການນໍາເຂົ້າ ແລະ ສົ່ງອອກ

ເລກທີ 1283 /ກຂອ.ບຂອ

ນະຄອນຫຼວງວຽງຈັນ, ວັນທີ 31 ມີນາ 2020

# ແຈ້ງການ

**ຮຽນ :** ບັນດາຫົວໜ່ວຍທຸລະກິດນໍາເຂົ້າ ແລະ ຈໍາໜ່າຍພາຫະນະທົ່ວປະເທດ,

**ເລື່ອງ :** ການອອກອະນຸຍາດນໍາເຂົ້າຍານພາຫະນະທີ່ນໍາໃຊ້ພະລັງງານໄຟຟ້າ.

- ອີງຕາມແຈ້ງການ ຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເລກທີ 383/ຫສນຍ, ລົງວັນທີ 18 ມີນາ 2020.
- ອີງຕາມແຈ້ງການ ຂອງ ຫ້ອງການ, ກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ 07380/ຍທຂ.ຫກ, ລົງວັນທີ 30 ມີນາ 2020.

ກົມການນໍາເຂົ້າ ແລະ ສົ່ງອອກ (ກຂອ) ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ເນື່ອງຈາກກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ມີຄວາມພ້ອມໃນການອອກອະນຸຍາດທາງດ້ານເຕັກນິກ ເພື່ອນໍາເຂົ້າ ແລະ ຂຶ້ນທະບຽນຍານພາຫະນະປະເພດທີ່ນໍາໃຊ້ໄຟຟ້າ ( Electronic Vehicle " EV " ) ແລ້ວ. ສະນັ້ນ, ກົມການນໍາເຂົ້າ ແລະ ສົ່ງອອກ ຈະໄດ້ເລີ່ມອອກອະນຸຍາດນໍາເຂົ້າຍານພາຫະນະທີ່ນໍາໃຊ້ໄຟຟ້າຄືນ ນັບແຕ່ມື້ອອກແຈ້ງການສະບັບນີ້ເປັນຕົ້ນໄປ ແລະ ລົບລ້າງ ແຈ້ງການ ເລກທີ 0983/ກຂອ.ບຂອ, ລົງວັນທີ 28 ກຸມພາ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ເປັນຂໍ້ມູນຕາມນີ້ດ້ວຍ.

ຫົວໜ້າກົມ,

ກະຊວງອຸດສາຫະກໍາ ແລະ ການຄ້າ
ກົມການນໍາເຂົ້າ ແລະ ສົ່ງອອກ

ສຸລິຍົນ ພິລາວົງ

**ຕິດຕໍ່ພົວພັນ:**

ພະແນກບໍລິຫານການນໍາເຂົ້າ ແລະ ສົ່ງອອກ

ໂທ: 021 412008